ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ເລກທີ: 040 /ພກພ/2024

ນະຄອນຫຼວງວຽງຈັນ, ວັນທີ: 13 ມີນາ 2024

# ມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ 1/2024

ກອງປະຊຸມສະພາບໍລິຫານຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຄັ້ງທີ 1/2024 ໄດ້ຈັດຂຶ້ນໃນວັນທີ 13 ມີນາ 2024, ທີ່ຊັ້ນ 3 ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ, ພາຍໃຕ້ການເປັນປະທານຂອງ ທ່ານ ສີທອງ ພົມມະຈິດ ເຊິ່ງມີສະມາຊິກສະພາບໍລິຫານ ແລະ ຜູ້ທີ່ກ່ຽວຂ້ອງເຂົ້າຮ່ວມ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິເຫັນດີເປັນເອກະພາບກັນດັ່ງນີ້:

1. ຮັບຮອງເອົາບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນ ປະຈຳປີ 2023 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
2. ຮັບຮອງການຈັດສັນກຳໄລສຸດທິ ປະຈຳປີ 2023 ເຂົ້າລັງສຳຮອງຕ່າງໆ ທີ່ກົດໝາຍກຳນົດໄວ້ ແລະ ຈ່າຍເງິນປັນຜົນ ເປັນຈຳນວນເງິນ 12.804.000.000 ກີບ ຫຼື 22 ກີບຕໍ່ຮຸ້ນ, ກຳນົດວັນທີ 24 ພຶດສະພາ 2024 ເປັນມື້ຈ່າຍເງິນປັນຜົນ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
3. ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
4. ແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົາສ໌ຄູບເປີສ໌ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີພາຍນອກ ສຳລັບປີ 2024 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
5. ຮັບຮອງເອົາການລາອອກຈາກຕຳແໜ່ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
6. ຮັບຮອງແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ໃໝ່ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
7. ຮັບຮອງເອົາ ອາຍຸການສະພາບໍລິຫານ ພກພ ວາລະເຮັດວຽກປີ 2024-2026 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;

8. ກໍານົດເອົາວັນທີ 27 ມີນາ 2024 ເປັນມື້ປິດປື້ມທະບຽນຜູ້ຖືຮຸ້ນ ເພື່ອກໍານົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ໄດ້ຮັບເງິນປັນຜົນ ປະຈໍາປີ 2023;
9. ກໍານົດວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2023 ໃນວັນທີ 26 ເມສາ 2024, ເວລາ 09:00 ໂມງ ໂດຍຈັດທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ;
10. ກໍານົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2023, ມີລາຍລະອຽດດັ່ງນີ້:

*ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2022;*

*ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດໍາເນີນງານຂອງບໍລິສັດ ປະຈໍາປີ 2023 ແລະ ເອກະສານລາຍງານການເງິນ ປະຈໍາປີ 2023 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ;*

*ວາລະທີ 3: ພິຈາລະນາ ແລະ ຮັບຮອງ ການຈັດສັນກໍາໄລສຸດທິ ປະຈໍາປີ 2023 ເຂົ້າຄັງສໍາຮອງຕ່າງໆ ທີ່ກົດໝາຍກໍານົດໄວ້ ແລະ ຈ່າຍເງິນປັນຜົນ;*

*ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດໍາເນີນທຸລະກິດຂອງບໍລິສັດ ປະຈໍາປີ 2024;*

*ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈໍາປີ 2024;*

*ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາ ການລາອອກຈາກຕໍາແໜ່ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຜູ້ອໍານວຍການໃຫຍ່;*

*ວາລະທີ 7: ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຜູ້ອໍານວຍການໃຫຍ່ໃໝ່;*

*ວາລະທີ 8: ພິຈາລະນາ ແລະ ຮັບຮອງອາຍຸການສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2024-2026.*

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

**ປະທານສະພາບໍລິຫານ**

ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

**ປອ. ສີທອງ ພົມມະຈິດ**

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com